ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

## ການຝຶກອົບຮົມການນຳໃຊ້ "ລະບົບຫ້ອງການທັນສະໄໝ (E-Office)" ຈັດຂຶ້ນໂດຍ ທະນາຄານແຫ່ງ ສປປ ລາວ ຮ່ວມກັບ ກະຊວງເຕັກໂນໂລຊີແລະການສື່ສານ




ໃນວັນທີ 14-15 ທັນວາ 2021 ຜ່ານມານີ້, ຕ່າງໜ້າ ທະນາຄານແຫ່ງ ສປປ ລາວ (ທຫລ) ໃຫ້ກຽດເປັນປະທານໂດຍ ທ່ານ ລັດສະໝີ ສຸວັນທອງ ຮອງຫົວໜ້າກົມເຕັກໂນໂລຊີ ຂໍ້ມູນຂ່າວສານ ທຫລ, ພ້ອມຄະນະ ໄດ້ສຳເລັດການເຂົ້າຮ່ວມການຝຶກອົບຮົມການນຳໃຊ້ "ລະບົບຫ້ອງການທັນສະໄໝ (E-Office) ຜ່ານທາງລະບົບອອນໄລ, ໂດຍໄດ້ຮັບຟັງບັນຍາຍຈາກທ່ານ ຄຳຜາຍ ອິນທະຣາ ຫົວໜ້າພະແນກ, ສູນບໍລິຫານລັດ ດີຈີຕ້ອນ, ກະຊວງເຕັກໂນໂລຊີ ແລະ ການສື່ສານພ້ອມດ້ວຍຄະນະຄູຝຶກ.

ຈຸດປະສົງຂອງການຝຶກອົບຮົມໃນຄັ້ງນີ້ ແມ່ນເປັນການຝຶກອົບຮົມໃຫ້ກັບພະນັກງານພາຍໃນ ທຫລ ໄດ້ສາມາດນຳໃຊ້ລະບົບຫ້ອງການທີ່ທັນສະໄໝ E-Office ເຊັ່ນວ່າ: ການແນະນຳການຈໍລະຈອນເອກະສານຂອງຫ້ອງການ ທຫລ, ຂໍ້ແນະນຳການນຳໃຊ້ E-Document Management, ການສ້າງ ແລະ ແກ້ໄຂ ແຟ້ມຈັດເອກະສານຂາເຂົ້າ - ອອກ, ຂໍ້ແນະນຳການນຳໃຊ້ງານ Incoming Document, ການນຳເອກະສານຂາເຂົ້າ ເຂົ້າໃນລະບົບຫ້ອງການທັນສະໄໝ ໃນຮູບແບບຂອງເຈ້ຍ ແລະ ການນຳໃຊ້ເອກະສານໂດຍການເຊື່ອມຕໍ່ລະບົບດ້ວຍກັນ ແລະ ການແນະນຳການໃຊ້ງານ Outgoing Document, ການສ້າງເອກະສານຂາອອກ ແລະ ການສິ່ງຫາພາກສ່ວນອື່ນ.

*//ຂ່າວ-ພາບ: ທ ສົມພິດ ທາມະວົງ*

*ຢູ່ເມືອງລາວໃຊ້ເງິນກີບລາວ*